# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ ........................................................ 1

II. ການເຄື່ອນໄຫວວຽກງານ ຂອງການນຳຂັ້ນສູງ ແລະ ຄະນະນຳ ຄຕພ. ........................................................ 6

III. ການເຄື່ອໄຫວວຽກງານ ຂອງສາມອົງການຈັດຕັ້ງມະຫາຊົນ ຄຕພ. ........................................................ 11


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ ມັງກອນ 2024


ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la

# I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 18 ມັງກອນ ຜ່ານມາ, ສະຫາຍ ຫງວຽນ ຟູຈອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ສົ່ງໂທລະເລກອວຍພອນເຖິງ ສະຫາຍ Tammura Tomoko ທີ່ໄດ້ຮັບເລືອກຕັ້ງເປັນປະທານຄະນະບໍລິຫານງານສູນກາງພັກກອມມູນິດຍີ່ປຸ່ນ ສະໄໝທີ 29, ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດຂອງກອງປະຊຸມໃຫຍ່ພັກກອມມູນິດຍີ່ປຸ່ນ ຄັ້ງທີ 29, ຕີລາຄາສູງຕໍ່ຜົນງານຂອງພັກກອມມູນິດຍີ່ປຸ່ນ ຕະຫຼອດໄລຍະ 102 ປີ ຜ່ານມາ, ສາມາດບັນລຸເປົ້າໝາຍການປະຕິວັດປະຊາທິປະໄຕ, ກ້າວໄປສູ່ການປະຕິວັດສັງຄົມນິຍົມ, ຍຶດໝັ້ນໃນການຕໍ່ຕ້ານສົງຄາມ ແລະ ລັດທິແຜ່ຂະຫຍາຍອຳນາດ, ຖືສຳຄັນວຽກງານການພັດທະນາທິດສະດີກ່ຽວກັບສັງຄົມນິຍົມ, ຕີລາຄາສູງຕໍ່ຄວາມສາມັກຄີ, ມິດຕະພາບອັນເປັນມູນເຊື້ອລະຫວ່າງສອງພັກ ທີ່ນັບມື້ນັບໄດ້ຮັບການປັບປຸງ ແລະ ພັດທະນາຢ່າງບໍ່ຢຸດຢັ້ງ. ພັກກອມມູນິດຫວຽດນາມ ຍິນດີຮ່ວມກັບພັກກອມມູນິດຍີ່ປຸ່ນ ໃນການຮັກສາກົນໄກການພົບປະແລກປ່ຽນ, ເພີ່ມທະວີການແລກປ່ຽນທາງດ້ານທິດສະດີ ແລະ ປະສານສົມທົບໃນເວທີຫຼາຍຝ່າຍ.

ວັນທີ 12 ມັງກອນ ຜ່ານມາ, ພັກກອມມູນິດຫວຽດນາມ ແລະ ພັກກອມມູນິດຈີນ ໄດ້ຈັດກອງປະຊຸມສຳມະນາທິດສະດີສອງພັກ ຄັ້ງທີ 18 ພາຍໃຕ້ຫົວຂໍ້: ປະສົບການ ແລະ ວິທີການເພີ່ມທະວີໃນການປົກປັກຮັກສາສະພາບລະບົບນິເວດໃນເຂດກໍ່ສ້າງ, ການຫັນເປັນທັນສະໄໝ. ພິເສດ ການນຳຂັ້ນສູງຂອງສອງປະເທດ ໄດ້ເຫັນດີສືບຕໍ່ລົງເລິກ, ຍົກລະດັບການຮ່ວມມືຍຸດທະສາດຮອບດ້ານ, ສ້າງຄູ່ຮ່ວມຊາຕາກຳຫວຽດນາມ-ຈີນ ທີ່ມີຄວາມໝາຍທາງດ້ານຍຸດທະສາດ, ຄວາມຜາສຸກຂອງປະຊາຊົນສອງຊາດ, ສັນຕິພາບ ແລະ ຄວາມກ້າວໜ້າຂອງມວນມະນຸດ. ພ້ອມກັນນັ້ນ, ໄດ້ວາງບັນດາທິດທາງ ແລະ ຍຸດທະສາດຂອງການຮ່ວມມືສອງຝ່າຍໄປຕາມທິດໝັ້ນຄົງ, ຮອບດ້ານ ແລະ ລົງເລິກບັນດາຂົງເຂດຕ່າງໆ.

ວັນທີ 08 ມັງກອນ ຜ່ານມາ, ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ໄດ້ຈັດກອງປະຊຸມສະຫຼຸບວຽກງານ ປະຈຳປີ 2023 ແລະ ທິດທາງໃນປີ 2024 ໄດ້ເນັ້ນໜັກການຜັນຂະຫຍາຍຢ່າງຕັ້ງໜ້າເພື່ອ ປະກອບສ່ວນເປັນຜົນສຳເລັດລວມຂອງປະເທດ, ຍາດໄດ້ບັນດາຜົນສຳເລັດທີ່ສຳຄັນ, ເປັນຂີດໝາຍບຸກທະລຸ ແລະ ເພີ່ມທະວີຄວາມໄວ້ເນື້ອເຊື່ອໃຈດ້ານການເມືອງກັບບັນດາຄູ່ຮ່ວມມືບົນພື້ນຖານ 03 ເສົາຄ້ຳດ້ານການທູດຄື: ການພົວພັນດ້ານພັກ, ການທູດລັດ ແລະ ການທູດປະຊາຊົນ.

### 2) ພັກກອມມູນິດຈີນ

ວັນທີ 21 ມັງກອນ ຜ່ານມາ, ຄະນະຈັດຕັ້ງສູນກາງພັກກອມມູນິດຈີນ ເບີກງົບປະມານ 318 ລ້ານຢວນ ຈາກເງິນສະຕິພັກ ເພື່ອສະໜັບສະໜູນການສຶກສາອົບຮົມສະມາຊິກພັກ, ຊຶ່ງສູນກາງພັກກອມມູນິດຈີນ ທີ່ມີ ສະຫາຍ ສີ ຈິ້ນຜິງ ເປັນໃຈກາງໃຫ້ຄວາມສຳຄັນສູງຕໍ່ວຽກງານສ້າງສາພັກຂັ້ນຮາກຖານ ແລະ ເອົາໃຈໃສ່ສະມາຊິກພັກ ແລະ ພະນັກງານພັກຂັ້ນຮາກຖານ. ນອກນັ້ນ, ງົບປະມານດັ່ງກ່າວ ຍັງໄດ້ນຳໃຊ້ຊ່ວຍເຫຼືອຄອບຄົວຂອງສະມາຊິກພັກ ແລະ ພະນັກງານທີ່ເສຍສະຫຼະຊີວິດ ເພື່ອສ່ວນລວມ ແລະ ສະໜັບສະໜູນ 160 ເມືອງ ໃນການຟື້ນຟູຄວາມຈະເລີນຮຸ່ງເຮືອງຂອງທ້ອງຖິ່ນ, ການອົບຮົມລວມໝູ່ແບບໝູນວຽນຕໍ່ສະມາຊິກພັກຢູ່ທ້ອງຖິ່ນ ແລະ ອື່ນໆ.

ວັນທີ 8 ມັງກອນ ຜ່ານມາ, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ ປະທານປະເທດຈີນ ໄດ້ເຂົ້າຮ່ວມກອງປະຊຸມ ຄັ້ງທີ III ຂອງຄະນະກຳມະການກວດກາລະບຽບວິໄນສູນກາງພັກກອມມູນິດຈີນ ສະໄໝທີ XX ແລະ ໄດ້ກ່າວວ່າ ການຕ້ານການສໍ້ລາດບັງຫຼວງຂອງຈີນ ໄດ້ຮັບໄຊຊະນະຢ່າງເດັດຂາດ

ແລະ ຖືກປັບປຸງຢ່າງຮອບດ້ານ, ແຕ່ສະພາບການຍັງມີຄວາມຂ້ຽວຂາດ ແລະ ສັບສົນຢູ່, ຄວນຮັບຮູ້ສາເຫດທີ່ພາໃຫ້ເກີດການສໍ້ລາດບັງຫຼວງຢ່າງແທ້ຈິງ, ຕ້ອງໄດ້ອອກແຮງຢ່າງຫ້າວຫັນເພື່ອໃຫ້ບັນລຸເປົ້າໝາຍໃນການຕ້ານການສໍ້ລາດບັງຫຼວງໃນຕໍ່ໜ້າ ແລະ ເດັດດ່ຽວຍາດເອົາໄຊຊະນະໃນໄລຍະຍາວ. ໃນ ປີ 2023, ຄະນະກຳມະການກວດກາລະບຽບວິໄນສູນກາງພັກກອມມູນິດຈີນ ສາມາດກວດສອບໄດ້ຫຼາຍກວ່າ 470.000 ຄະດີ ແລະ 405.000 ຄົນຖືກລົງໂທດ, ລວມມີລັດຖະມົນຕີ ແລະ ເຈົ້າໜ້າທີ່ຂັ້ນແຂວງ 34 ຄົນ.

### 3) ພັກແຮງງານເກົາຫຼີ

ໃນໄລຍະການຊ້ອມຮົບຢ່າງຕໍ່ເນື່ອງຂອງ ສ. ເກົາຫຼີ, ອາເມລິກາ ແລະ ພັນທະມິດ, ເພື່ອເປັນການຕອບໂຕ້ ສປປ ເກົາຫຼີ ໄດ້ຍຸຕິການອອກອາກາດທາງວິທະຍຸ ແລະ ເວັບໄຊພົວພັນແລກປ່ຽນລະຫວ່າງສອງເກົາຫຼີ, ປະກາດຍຸບຄະນະກຳມະການທ້ອນໂຮມປະເທດຊາດ ແລະ ທຸກອົງການຈັດຕັ້ງທີ່ກ່ຽວຂ້ອງກັບວຽກງານລະຫວ່າງສອງເກົາຫຼີ ພ້ອມທັງປ່ຽນລັດຖະທຳມະນູນໃຫ້ສ.ເກົາຫຼີ ເປັນປະເທດທີ່ບໍ່ເປັນມິດອັນດັບ 1 ແລະ ເປັນສັດຕູບໍ່ປ່ຽນແປງຂອງ ສປປ.ເກົາຫຼີ.ວັນທີ 19/01/2024, ສປປ ເກົາຫຼີ ໄດ້ທົດລອງລະບົບອາວຸດນິວເຄຼຍໃຕ້ນໍ້າ Haeil-5-23 ທີ່ຢູ່ໃນຂັ້ນຕອນການພັດທະນາ, ເພື່ອປ້ອງກັນປະເທດຊາດ.

### 4) ພັກກອມມູນິດກູບາ

ວັນທີ 1 ມັງກອນ ຜ່ານມາ, ກູບາ ໄດ້ຈັດພິທີສະເຫຼີມສະຫຼອງການປະຕິວັດກູບາ(ວັນຊາດ) ຄົບຮອບ 65 ປີ ໂດຍການເປັນປະທານຂອງ ສະຫາຍ Miguel Díaz-Canel, ເລຂາທິການທີໜຶ່ງຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດກູບາ ແລະ ໄດ້ກ່າວວ່າ ການປະຕິວັດກູບາເປັນການປົດປ່ອຍປະເທດຊາດ ແລະ ປະຊາຊົນກູບາອອກຈາກການປົກຄອງ ແລະ ການຂູດຮີດຂອງຈັກກະພັດນິຍົມ. ຕະຫຼອດໄລຍະ 60 ກວ່າ ທີ່ກູບາໄດ້ຮັບການປົດປ່ອຍເຮັດໃຫ້ປະເທດໄດ້ຮັບການພັດທະນາໃນຫຼາຍດ້ານ ໂດຍສະເພາະດ້ານສາທາລະນະສຸກ, ການສຶກສາ, ວິທະຍາສາດ, ເຕັກໂນໂລ, ສິ່ງແວດລ້ອມ ແລະ ການພັດທະນາແບບຍືນຍົງ.

### 5) ກຳປູເຈຍ

ວັນທີ 25 ກຸມພາ 2024 ກຳປູເຈຍ ຈະເລືອກຕັ້ງສະມາຊິກສະພາສູງສະໄໝທີ 5 ຈຳນວນ 62 ທ່ານ (60 ທ່ານແມ່ນຈະຖືກເລືອກຕັ້ງ ແລະ 2 ທ່ານ ຈະຖືກແຕ່ງຕັ້ງ) ໂດຍແມ່ນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາທ້ອງຖິ່ນ ເປັນຜູ້ມີສິດປ່ອນບັດເລືອກຕັ້ງເທົ່ານັ້ນ. ຊຶ່ງໃນວັນທີ 8 ມັງກອນ ຜ່ານມາ ຄະນະກຳມະການເລືອກຕັ້ງກຳປູເຈຍໄດ້ປະກາດບັນດາສະມາຊິກສະພາແຫ່ງຊາດ ຈຳນວນ 125 ທ່ານ ແລະ ສະມາຊິກສະພາທ້ອງຖິ່ນ ຈຳນວນ 11.722 ທ່ານທີ່ໄດ້ລົງທະບຽນຈະປ່ອນບັດເລືອກຕັ້ງສະມາຊິກສະພາສູງດັ່ງກ່າວ.

### 6) ອິນໂດເນເຊຍ

ອິນໂດເນເຊຍ ຈະຈັດການເລືອກຕັ້ງປະທານາທິບໍດີ ໃນວັນທີ 14/02/2024, ຊຶ່ງຈະເປັນການແຂ່ງຂັນຂອງ 03 ຜູ້ລົງສະໝັກຄື: ທ່ານ Anies Baswedan, ອະດີດເຈົ້າຄອງນະຄອນຈາກາຕາ; ທ່ານ Prawobo Subianto, ລັດຖະມົນຕີກະຊວງປ້ອງກັນປະເທດ ແລະ ທ່ານ Ganjar Pranowo, ອະດີດເຈົ້າແຂວງ Java. ຈາກຜົນການສາຫຼວດໃນຕົ້ນເດືອນມັງກອນ 2024 ທ່ານ Prawobo Subianto ໄດ້ຮັບຄະແນນນິຍົມ 48,6%; ທ່ານ Anies Baswedan ໄດ້ຮັບຄະແນນນິຍົມ 24% ແລະ ທ່ານ Ganjar Pranowo ໄດ້ຮັບຄະແນນນິຍົມ 21,6%.

### 7) ການເລືອກຕັ້ງໄຕ້ຫວັນ

ວັນທີ 13 ມັງກອນ ຜ່ານມາ, ໄຕ້ຫວັນ ຈັດການເລືອກຕັ້ງທົ່ວໄປ ເພື່ອເລືອກເອົາຜູ້ນາຄົນໃໝ່, ຊຶ່ງຜົນການເລືອກຕັ້ງ ທ່ານ Lai Ching-te, ຮອງຜູ້ນາໄຕ້ຫວັນ ຈາກພັກປະຊາທິປະໄຕກ້າວໜ້າ (DPP) ໄດ້ຮັບຄະແນນສຽງສະໜັບສະໜູນ 5,5 ລ້ານສຽງ (40%); ທ່ານ Hou Yu-ih ຈາກພັກ Kuomintang (KMT) ໄດ້ 4,6 ລ້ານສຽງ (33,5%) ແລະ ທ່ານ Ko Wen-je ຈາກພັກ ປະຊາຊົນໄຕ້ຫວັນ (TPP) ໄດ້ 3,7 ລ້ານສຽງ (26,5%). ຕໍ່ໄຊຊະນະດັ່ງກ່າວ, ທ່ານ Lai Ching-te ກ່າວວ່າ ຈີນແຜ່ນດິນໃຫຍ່ ແລະ ໄຕ້ຫວັນ ແຕກຕ່າງກັນ, ຊຶ່ງໄຕ້ຫວັນ ຈະສືບຕໍ່ຮ່ວມມືກັບອາເມລິກາ. ຂະນະດຽວກັນ, ໄຕ້ຫວັນ ຈັດການເລືອກຕັ້ງສະພາ ເພື່ອເລືອກເອົາ 113 ບ່ອນນັ່ງ, ພັກ KMT ໄດ້ 52 ບ່ອນນັ່ງ ເພີ່ມຂຶ້ນ 14 ບ່ອນນັ່ງ ທຽບໃສ່ການເລືອກຕັ້ງຄັ້ງຜ່ານມາ; ພັກ DPP ໄດ້ 51 ບ່ອນນັ່ງ ຫຼຸດລົງ 10 ບ່ອນນັ່ງ ແລະ ພັກ TPP ໄດ້ 08 ບ່ອນນັ່ງ ເພີ່ມຂຶ້ນ 03 ບ່ອນນັ່ງ. ຜົນການເລືອກສະພາແຕກຕ່າງຈາກ ເລືອກຕັ້ງຜູ້ບໍລິຫານ ມີການແບ່ງແຍກພັກພວກຈະແຈ້ງ ພາຍໃນໄຕ້ຫວັນ ເຊິ່ງຈະເຮັດໃຫ້ການດຳເນີນນະໂຍບາຍຂອງ ພັກ DPP ມີຄວາມຫຍຸ້ງຍາກ. ສ່ວນໂຄສົກຫ້ອງການວຽກງານໄຕ້ຫວັນຂອງຈີນ ຖະແຫຼງວ່າ ໄຊຊະນະຂອງ ທ່ານ Lai Ching-te ຈະບໍ່ຂັດຂວາງທ່າອ່ຽງຂອງການໂຮມຊາດໄດ້ ແລະ ເປົ້າໝາຍຂອງການໂຮມຊາດຍັງເໝືອນເດີມ. ອາເມລິກາ ອອກຖະແຫຼງການ ສະແດງຄວາມຊົມເຊີຍຕໍ່ກັບການເລືອກຕັ້ງ ແລະ ລະບອບປະຊາທິປະໄຕທີ່ເຂັ້ມແຂງຂອງໄຕ້ຫວັນ. ອາເມລິກາ ແລະ ໄຕ້ຫວັນ ຈະສືບຕໍ່ຮ່ວມມືໂດຍສະເພາະທາງດ້ານເສດຖະກິດ, ວັດທະນະທຳ ແລະ ການໄປມາຫາສູ່ຂອງປະຊາຊົນ. ຂະນະດຽວກັນ, ອາມເລິກາ ໄດ້ສົ່ງຄະນະຜູ້ແທນ ນຳໂດຍ ທ່ານ Stephen Hadley, ອະດີດທີ່ປຶກສາດ້ານຄວາມໝັ້ນຄົງແຫ່ງຊາດ ຢ້ຽມຢາມໄຕ້ຫວັນ ແລະ ພົບປະກັບ ທ່ານ ນາງ Tsai Ing-Wen, ຜູ້ບໍລິຫານໄຕ້ຫວັນ ເພື່ອຢ້ຳຄືນການສະໜັບສະໜູນຂອງອາເມລິກາກັບໄຕ້ຫວັນ. ສປ ຈີນອອກຖະແຫຼງການປະນາມອາເມລິກາທີ່ຖະແຫຼງຮັບຮູ້-ສະໜັບສະໜູນຜົນເລືອກຕັ້ງໄຕ້ຫວັນ ວ່າເປັນການລະເມີດຫຼັກ ການຈີນດຽວຢ່າງຮ້າຍແຮງ. ໄຕ້ຫວັນແມ່ນວຽກງານພາຍໃນຂອງຈີນ, ໂລກນີ້ມີພຽງຈີນດຽວ ແລະ ໄຕ້ຫວັນແມ່ນສ່ວນໜຶ່ງຂອງຈີນ, ຂັດຄ້ານອິດທິກຳລັງປໍລະປັກທີ່ຫວັງແບ່ງແຍກໄຕ້ຫວັນເປັນເອກະລາດ, ເຊື່ອໝັ້ນວ່າປະຊາຄົມໂລກຈະສືບຕໍ່ຍຶດໝັ້ນຫຼັກການຈີນດຽວ, ສະໜັບສະໜູນຈີນຂັດຄ້ານການແບ່ງແຍກໄຕ້ຫວັນເປັນເອກະລາດ ແລະ ຈີນມຸ່ງໝັ້ນທີ່ຈະທ້ອນໂຮມຊາດເປັນເອກະພາບ.

ສປປ ລາວ, ລັດເຊຍ, ກູບາ ແລະ ຫຼາຍປະເທດ ຢືນຢັນສະໜັບສະໜູນພາລະກິດເຕົ້າໂຮມປະເທດຊາດໃຫ້ເປັນເອກະພາບກັນຂອງຈີນ. ບັນຫາໄຕ້ຫວັນແມ່ນວຽກງານພາຍໃນຂອງຈີນ, ສປປ ລາວ ສະໜັບສະໜູນນະໂຍບາຍຈີນດຽວ ແລະ ຖືວ່າທີ່ ໄຕ້ຫວັນ ເປັນພາກສ່ວນໜຶ່ງ ຕັດແຍກອອກຈາກ ສປ.ຈີນ ບໍ່ໄດ້, ຄັດຄ້ານການກະທຳທຸກຮູບແບບທີ່ຈະທຳລາຍອະທິປະໄຕ ແລະ ພື້ນແຜ່ນດິນອັນຄົບຖ້ວນຂອງ ສປ ຈີນ.

## 2. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1) ປະທານາທິບໍດີລັດເຊຍ ປະກາດຈຸດສຸມການຮ່ວມມືຂອງກຸ່ມ BRICS

ວັນທີ 01/01/2024, ລັດເຊຍ ໃນຖານະປະທານໝູນວຽນຂອງກຸ່ມ BRICS ປະຈຳປີ 2024. ທ່ານ Vladimir Putin, ປະທານາທິບໍດີລັດເຊຍ ໄດ້ປະກາດຈຸດສຸມການຮ່ວມມື 03 ຂົງເຂດຄື: ດ້ານການເມືອງ ແລະ ຄວາມໝັ້ນຄົງ; ເສດຖະກິດ ແລະ ການທະນາຄານ; ການແລກປ່ຽນວັດທະນະທຳ-ສັງຄົມ. ພ້ອມດຽວກັນ, ທ່ານ Putin ໄດ້ກ່າວວ່າ ປະເທດສະມາຊິກຄວນເອົາໃຈໃສ່ຂອດປະສານງານທາງດ້ານນະໂຍບາຍຕ່າງປະເທດເປັນພິເສດ, ຮ່ວມກັນຮັບມືກັບ ບັນດາສິ່ງທ້າທາຍ ແລະ ໄພຂົ່ມຂູ່ຕ່າງໆ, ປົກປັກຮັກສາຄວາມໝັ້ນຄົງ, ສະຖຽນລະພາບຂອງພາກພື້ນ ແລະ ສາກົນ, ຮັບປະກັນດ້ານພະລັງງານ ແລະ ພືດພັນທັນຍາຫານ, ຍົກສູງບົດບາດກຸ່ມ BRICS ຕໍ່ກັບລະບົບເງິນຕາ ແລະ ທະນາຄານສາກົນ, ເປີດກວ້າງການຮ່ວມມືລະຫວ່າງທະນາຄານ ແລະ ການນຳໃຊ້ເງິນຕາຕ່າງປະເທດ, ຊຸກຍູ້ການແລກປ່ຽນທາງດ້ານເຕັກໂນໂລຊີ, ການແພດ, ວັດທະນະທຳ, ສິ່ງແວດລ້ອມ, ກິລາ ແລະ ການໄປມາຫາສູ່ຂອງປະຊາຊົນ. ຂະນະທີ່, ໂຄສົກກະຊວງການຕ່າງປະເທດຈີນ ໄດ້ກ່າວວ່າ ຈີນເຊື່ອໝັ້ນຕໍ່ການພັດທະນາ, ກົນໄກການຮ່ວມ

ມີຕະຫຼອດ 18 ຜ່ານມາ ຂອງກຸ່ມ BRICS ທີ່ນັບມື້ນັບເຂັ້ມແຂງ, ມີບົດບາດ ແລະ ໄດ້ປະກອບສ່ວນຢ່າງຕັ້ງໜ້າໃນການພັດທະນາຂອງໂລກ. ການຂະຫຍາຍສະມາຊິກຂອງກຸ່ມແມ່ນສອດຄ່ອງກັບຄວາມມຸ່ງມາດປາດຖະໜາຂອງບັນດາປະເທດທີ່ກໍາລັງພັດທະນາ ເພື່ອການຫັນເປັນໂລກຫຼາຍຂົ້ວ. ຈີນຈະຮ່ວມກັບບັນດາປະເທດສະມາຊິກຊຸກຍູ້ການຮ່ວມມືໃຫ້ໄດ້ຮັບໝາກຜົນຢ່າງບໍ່ຢຸດຢັ້ງ.

### 2) ສະພາບປັ່ນປ່ວນຂໍ້ຂັດແຍ່ງອູແກຣນ-ລັດເຊຍ

ການໂຈມຕີກັນລະຫວ່າງ ອູແກຣນ ແລະ ລັດເຊຍ ຍັງສືບຕໍ່ທະວີຄວາມຮຸນແຮງ ຢູ່ຫຼາຍພາກພື້ນຂອງອູແກຣນ. ສ່ວນພັນທະມິດຂອງອູແກຣນ ຍັງສືບຕໍ່ຊອກຫາວິທີທາງໃນການສະໜັບສະໜູນອູແກຣນ ໂດຍສະເພາະການເພີ່ມກໍາລັງການຜະລິດລູກປືນໃຫຍ່ຂອງອີຢູ. ວັນທີ 22/01/2024, ທ່ານ Donald Tusk, ນາຍົກລັດຖະມົນຕີຄົນໃໝ່ໂປໂລຍ ຢ້ຽມຢາມອູແກຣນ ແລະ ພົບກັບປະທານາທິບໍດີອູແກຣນ, ພ້ອມທັງປະກາດຊ່ວຍເຫຼືອທາງການທະຫານຮອບໃໝ່ ແລະ ຮັບຜູ້ລີ້ໄພອູແກຣນ ຕື່ມອີກ 01 ລ້ານຄົນ. ພ້ອມກັນນັ້ນ, ຄະນະກໍາມະການເອີຣົບ (EU) ແລະ ກອງທຶນການລົງທຶນເອີຣົບ (EIF) ໄດ້ສ້າງຕັ້ງກອງທຶນຫຸ້ນສ່ວນປ້ອງກັນຊາດ (DEF) ທີ່ມີງົບປະມານ 175 ລ້ານ ເອີໂຣ ເພື່ອໜູນໃຊ້ເຂົ້າໃນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ຕັ້ງເປົ້າລະດົມທຶນໃຫ້ໄດ້ 500 ລ້ານເອີໂຣ ໃນ 4 ປີ ຕໍ່ໜ້າ ແລະ ສ່ວນໜຶ່ງເພື່ອຊ່ວຍອຸແກນ.

ສະພາບການໂຈມຕີຂອງສອງຝ່າຍຍັງສືບຕໍ່ເພີ່ມທະວີຂຶ້ນ ພາຍຫຼັງທີ່ອູແກຣນ ໂຈມຕີທາງອາກາດໃສ່ສາງເກັບແກ໋ສທໍາມະຊາດຂອງລັດເຊຍ ຢູ່ ເຂດທະເລບານຕິກ (ຫ່າງຈາກນະຄອນເຊັນປີເຕີສະເບີກ 110 ກິໂລແມັດ) ແລະ ໂຈມຕີໃສ່ຂົງເຂດ Donetsk ເຮັດໃຫ້ມີຜູ້ເສຍຊີວິດ 27 ຄົນ ແລະ ບາດເຈັບ 20 ຄົນ. ລັດເຊຍ ໄດ້ກ່າວປະນາມຕໍ່ການໂຈມຕີດັ່ງກ່າວວ່າ ຕໍ່ເຫດການນີ້ຍິ່ງສະແດງໃຫ້ເຫັນເຖິງຄວາມຈໍາເປັນ ແລະ ຄວາມສໍາຄັນຂອງປະຕິບັດການພິເສດທາງທະຫານຂອງລັດເຊຍ ຢູ່ ອູແກຣນ. ສ່ວນ ເລຂາທິການໃຫຍ່ ສປຊ ກ່າວປະນາມການໂຈມຕີຂອງອູແກຣນວ່າ ເປັນການລະເມີດມະນຸດສະທໍາສາກົນທີ່ບໍ່ສາມາດຮັບໄດ້ ແລະ ຕ້ອງຢຸດຕິໂດຍທັນທີ. ຂະນະທີ່, ລັດເຊຍ ຕອບໂຕ້ໂດຍສຸມໃສ່ການໂຈມຕີພື້ນຖານໂຄງລ່າງທາງທະຫານຂອງອູແກຣນ ຢ່າງໜັກໜ່ວງ ໃນຂອບເຂດທົ່ວປະເທດ ຢູ່ນະຄອນຫຼວງ Kyiv ແລະ ເມືອງ Kharkiv ເຮັດໃຫ້ມີຜູ້ເສຍຊີວິດຫຼາຍກວ່າ 18 ຄົນ ແລະ ບາດເຈັບ 130 ຄົນ. ວັນທີ 24/01/2024, ລັດເຊຍໄດ້ລາຍງານວ່າ ອູແກຣນ ໄດ້ຍິງເຮືອບິນທະຫານຂອງລັດເຊຍ ທີ່ມີຊະເລີຍເສິກອູແກຣນ 65 ຄົນ ຕົກຢູ່ເມືອງ Belgorod ເຮັດໃຫ້ຊະເລີຍເສິກທັງໝົດເສຍຊີວິດ.

### 3) ຂໍ້ຂັດແຍ່ງຢູ່ຕາເວັນອອກກາງ

ຂໍ້ຂັດແຍ່ງປາແລັດສະຕິນ-ອິດສະຣາແອນ ເພີ່ມທະວີຄວາມເຄັ່ງຕຶງຢ່າງຕໍ່ເນື່ອງ ແລະ ກາຍເປັນຂໍ້ຂັດແຍ່ງລະດັບພາກພື້ນຕາເວັນອອກກາງ. ພາຍຫຼັງທີ່ ອິດສະຣາແອນ ໂຈມຕີໃສ່ນະຄອນຫຼວງ Damascas ຂອງຊີຣີ ໃນວັນທີ … ເຮັດໃຫ້ມີຜູ້ເສຍຊີວິດ ແລະ ບາດເຈັບຈໍານວນໜຶ່ງ. ໃນນັ້ນ, ມີເຈົ້າໜ້າທີ່ລະດັບສູງຂອງກອງກໍາລັງປະຕິວັດອີຣານ (IRGC) ເສຍຊີວິດ 05 ຄົນ. ສ່ວນກຸ່ມ Hamas ໄດ້ໂຈມຕີຕຶກແຫ່ງໜຶ່ງຢູ່ເຂດ Gaza ເຮັດໃຫ້ທະຫານອິດສະຣາແອນ ເສຍຊີວິດ 24 ຄົນ. ບັນດາກຸ່ມຕ່າງໆທີ່ສະໜັບສະໜູນກຸ່ມ Hamas ເຊັ່ນ: ກຸ່ມ Hezbollah ຂອງລີບັງ, ກຸ່ມ Houthis ຂອງເຢເມນ ແລະ ກຸ່ມອື່ນໆ ຍັງສືບຕໍ່ໂຈມຕີໃນຂົງເຂດຕ່າງໆຂອງອິດສະຣາແອນ. ບັນດາຄ້າຍທະຫານຂອງອາເມລິກາ ທີ່ປະຈໍາຢູ່ອີຣັກ ແລະ ຊີຣີ ຕົກເປັນເປົ້າໝາຍຂອງການໂຈມຕີຂອງບັນດາກຸ່ມທີ່ສະໜັບສະໜູນກຸ່ມ Hamas. ຮອດປັດຈຸບັນ, ມີຜູ້ເສຍຊີວິດຫຼາຍກວ່າ 25.000 ຄົນ ແລະ ບາດເຈັບ 64.000 ກວ່າຄົນ.

**4) ສະພາບແຫຼມເກົາຫຼີ**

ສະພາບແຫຼມເກົາຫຼີ ຍັງສືບຕໍ່ເຄັ່ງຕຶງຢ່າງຕໍ່ເນື່ອງພາຍຫຼັງການຊ້ອມຮົບຂອງ ສ. ເກົາຫຼີ ແລະ ອາເມລິກາ ໃນນ່ານນ້ຳໃກ້ກັບເຂດເສັ້ນແບ່ງທາງການທະຫານຂອງສອງເກົາຫຼີ ແລະ ໄດ້ຍິງລູກປືນໃຫຍ່ 400 ລູກ. ລະຫວ່າງວັນທີ 05-07/01/2024, ສປປ ເກົາຫຼີ ໄດ້ຍິງລູກປືນໃຫຍ່ຫຼາຍກວ່າ 350 ລູກ ຕົກລົງໃກ້ກັບຊາຍແດນພາກຕາເວັນອອກສ່ຽງໃຕ້ຂອງ ສ. ເກົາຫຼີ. ຜູ້ນຳສູງສຸດ ສປປ ເກົາຫຼີ ໄດ້ຮຽກຮ້ອງໃຫ້ກອງທັບ ສປປ ເກົາຫຼີ ເພີ່ມການຜະລິດລູກສອນໄຟ ເພື່ອກຽມພ້ອມໃນກໍລະນີມີການປະເຊີນໜ້າທາງກຳລັງທະຫານ. ສ່ວນວ່າ ສປ.ຈີນ ໄດ້ຕິດຕາມສະພາບແຫຼມເກົາຫຼີຢ່າງໃກ້ຊິດ, ບັນຫາແຫຼມເກົາຫຼີຄວນໄດ້ຮັບການແກ້ໄຂດ້ວຍການເຈລະຈາ, ຮຽກຮ້ອງໃຫ້ທຸກຝ່າຍອົດທົນອົດກັ້ນ, ຫຼີກລ່ຽງການສ້າງສະພາບຄວາມເຄັ່ງຕຶງຂຶ້ນຕື່ມ ແລະ ສ້າງເງື່ອນໄຂໃຫ້ແກ່ການຟື້ນຟູການເຈລະຈາຮອບໃໝ່.

**5) ສະພາບມຽນມາ**

ສະພາບຄວາມບໍ່ສະຫງົບຢູ່ມຽນມາ ຍັງສືບຕໍ່ມີຂຶ້ນເປັນໄລຍະໃນຫຼາຍຂົງເຂດ ເຖິງແມ່ນວ່າ ຈີນໄດ້ຈັດກອງປະຊຸມເພື່ອໄກ່ເກ່ຍຂໍ້ຂັດແຍ່ງລະຫວ່າງກອງທັບມຽນມາ ແລະ ກອງກຳລັງຊົນເຜົ່າຕະອັງ (TNLA) ລະຫວ່າງວັນທີ 10-11/01/2024 ທີ່ນະຄອນຄຸນໝິງ ແລະ ສາມາດບັນລຸຂໍ້ຕົກລົງຢຸດຍິງຊົ່ວຄາວ ຢູ່ ເຂດຊາຍແດນທາງພາກເໜືອຂອງມຽນມາທີ່ຕິດກັບຈີນ. ແຕ່ໃນວັນທີ 21/01/2024, ກອງກຳລັງອາລະກັນ (AA) ໄດ້ປະທະກັບກອງທັບມຽນມາ ຢ່າງຮຸນແຮງຢູ່ 06 ເມືອງຂອງລັດ Rankine, ຊຶ່ງກອງທັບອາລະກັນສາມາດຍຶດໄດ້ບາງເມືອງ, ໄດ້ຈັບກຸມນາຍພົນ 01 ຄົນ ແລະ ທະຫານຈຳນວນ 300 ຄົນ, ສ່ວນ ກອງທັບມຽນມາ ກໍໄດ້ສົ່ງກຳລັງເສີມປະມານ 600 ຄົນ ເພື່ອຕໍ່ສູ້ຄືນກອງທັບອາລະກັນ. ສ່ວນ ອິນເດຍ ກະກຽມແຜນສ້າງຮົ້ວ ເພີ່ມຕື່ມເພື່ອປ້ອງກັນການເຂົ້າໄປລີ້ໄພຂອງຄົນມຽນມາເນື່ອງຈາກຄວາມບໍ່ສະຫງົບດັ່ງກ່າວ.

**6) ສະພາບທະເລຈີນໃຕ້**

ພາຍຫຼັງກອງປະຊຸມສາມຝ່າຍ ອາເມລິກາ, ສ. ເກົາຫຼີ ແລະ ຍີ່ປຸ່ນ ໄດ້ອອກຖະແຫຼງການຮ່ວມທີ່ມີເນື້ອໃນກ່າວເຖິງບັນຫາທະເລຈີນໃຕ້, ວັນທີ 08/01/2024, ຈີນ ໄດ້ຖະແຫຼງການ, ຮຽກຮ້ອງໃຫ້ຝ່າຍຕ່າງໆທີ່ກ່ຽວຂ້ອງປະລະແນວຄິດສົງຄາມເຢັນ, ຢຸດຕິສະພາບການທີ່ເປັນປໍລະປັກຜ່ານກຸ່ມຕ່າງໆ ແລະ ພະຍາຍາມເຮັດໃຫ້ສະພາບການໃນພາກພື້ນເຄັ່ງຕຶງຂຶ້ນຕື່ມ. ຈີນຄັດຄ້ານປະເທດຕ່າງໆທີ່ສ້າງກຸ່ມຂຶ້ນມາເພື່ອຈຳກັດການເຕີບໂຕຂອງປະເທດອື່ນ, ແຊກແຊງວຽກງານພາຍໃນ ແລະ ໃສ່ຮ້າຍປ້າຍສີຈີນ. ສຳລັບບັນຫາໄຕ້ຫວັນແມ່ນວຽກງານພາຍໃນຂອງຈີນ, ບໍ່ອະນຸຍາດໃຫ້ກຳລັງພາຍນອກເຂົ້າມາແຊກແຊງເດັດຂາດ. ວັນທີ 09/01/2024, ຈີນປະກາດຂວ້າບາດ 05 ບໍລິສັດຂອງອາເມລິກາ ຄື: ບໍລິສັດ BAE System Land and Arma ment, Alliant Techsystems, AeroVironment, Viasat ແລະ Data Link. ຕໍ່ການຂວ້ຳບາດຄັ້ງນີ້ ປະກອບມີການອາຍັດຊັບສິນເຄື່ອນທີ່ ແລະ ຄົງທີ່ບັນດາບໍລິສັດເຫຼົ່ານີ້ທີ່ຕັ້ງຢູ່ດິນແດນຈີນ; ຫ້າມບໍ່ໃຫ້ອົງການຈັດຕັ້ງ ຫຼື ບຸກຄົນ, ນິຕິບຸກຄົນພາຍໃນດິນແດນຈີນຊື້-ຂາຍ ຫຼື ຮ່ວມມືກັບບັນດາບໍລິສັດດັ່ງກ່າວ.

## II. ການເຄື່ອນໄຫວວຽກງານ ຂອງການນຳຂັ້ນສູງ ແລະ ຄະນະນຳ ຄຕພ.

### 1) ເລຂາທິການໃຫຍ່ ເຂົ້າຮ່ວມກອງປະຊຸມໂຕະມົນ ລະຫວ່າງ ພັກຣັດເຊຍເອກະພາບ ແລະ ພັກການເມືອງອາຊຽນ.




ວັນທີ 23 ມັງກອນ ຜ່ານມາ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ປປ ລາວ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ນຳພາຄະນະຜູ້ແທນພັກ ປປ ລາວ ເຂົ້າຮ່ວມກອງປະຊຸມໂຕະມົນ ລະຫວ່າງ ພັກຣັດເຊຍເອກະພາບ ແລະ ພັກການເມືອງຂອງປະເທດອາຊຽນ ຜ່ານຮູບແບບວິດີໂອທາງໄກ ໂດຍການເປັນເຈົ້າພາບ ຂອງ ພັກຣັດເຊຍເອກະພາບ ພາຍໃຕ້ຫົວຂໍ້: “ບົດບາດຂອງບັນດາກຳລັງການເມືອງທີ່ມີຄວາມຮັບຜິດຊອບຂອງຣັດເຊຍ ແລະ ບັນດາປະເທດອາຊຽນ ໃນການກໍ່ສ້າງລະບຽບໂລກໃໝ່ທີ່ຍຸຕິທຳ”; ມີສະຫາຍ ດີມິຕຣີ ເມດເວເດບ, ປະທານພັກຣັດເຊຍເອກະພາບ, ຮອງປະທານສະພາຄວາມໝັ້ນຄົງແຫ່ງສະຫະພັນຣັດເຊຍ ແລະ ການນຳຂັ້ນສູງຈາກ 7 ພັກການເມືອງ, ໃນ 7 ປະເທດອາຊຽນ ເຂົ້າຮ່ວມ.

ກອງປະຊຸມດັ່ງກ່າວໄດ້ຈັດເປັນ ຄັ້ງທີ 3 ແລະ ເປັນຄັ້ງທຳອິດທີ່ປຶກສາຫາລືພາຍໃຕ້ຫົວຂໍ້ດັ່ງກ່າວ. ກອງປະຊຸມຄັ້ງນີ້ ຈັດຂຶ້ນໃນໂອກາດຄົບຮອບ 28 ປີ ການເປັນຄູ່ຮ່ວມມື ລະຫວ່າງ ອາຊຽນ-ຣັດເຊຍ ຊຶ່ງເປັນຂີດໝາຍສຳຄັນແຫ່ງການສືບຕໍ່ເສີມຂະຫຍາຍການຮ່ວມມືດ້ານພັກ ລະຫວ່າງ ພັກການເມືອງປະເທດອາຊຽນ ແລະ ພັກຣັດເຊຍເອກະພາບ, ເພື່ອຊຸກຍູ້ການຮ່ວມມືດ້ານລັດ ລະຫວ່າງ ອາຊຽນ ແລະ ຣັດເຊຍ ເພື່ອເສີມຂະຫຍາຍການຮ່ວມມືທີ່ເປັນຮູບປະທຳ ແລະ ຮັບມືກັບສິ່ງທ້າທາຍພາກພື້ນ ແລະ ສາກົນ ຢ່າງມີປະສິດທິພາບ.

ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ປະທານປະເທດແຫ່ງ ສປປ.ລາວ ໄດ້ມີຄວາມເຫັນ ຕີລາຄາສູງ ແລະ ຊົມເຊີຍການຈັດກອງປະຊຸມຄັ້ງນີ້ຂອງພັກຣັດເຊຍເອກະພາບ; ຕີລາຄາສະພາບການພາກພື້ນ ແລະ ສາກົນ ທີ່ຍັງສືບຕໍ່ຜັນແປໄປຢ່າງໄວວາ, ສະຫຼັບສັບຊ້ອນ ແລະ ຄາດຄະເນໄດ້ຍາກ, ມີທັງກາລະໂອກາດ ແລະ ສິ່ງທ້າທາຍຕ່າງໆຕໍ່ສັນຕິພາບ ຄວາມໝັ້ນຄົງ ແລະ ການພັດທະນາຂອງບັນດາປະຊາຊາດໃນໂລກ; ຕີລາຄາສູງຕໍ່ການສະໜັບສະໜູນ ແລະ ການຊ່ວຍເຫຼືອອັນລ້ຳຄ່າ ຂອງສະຫະພັນຣັດເຊຍ ທີ່ມີຕໍ່ ສປປ ລາວ ໃນໄລຍະຜ່ານມາ ກໍຄືການພົວພັນຮ່ວມມື ລະຫວ່າງ ສປປ ລາວ ກັບ ສ.ຣັດເຊຍ ກໍຄື ພັກ ປປ ລາວ ແລະ ພັກຣັດເຊຍເອກະພາບ ທີ່ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ແລະ ມີບາດກ້າວໃໝ່ທີ່ຕັ້ງໜ້າໃນຫຼາຍຂົງເຂດ ເຊັ່ນ: ດ້ານການເມືອງ-ຄວາມໝັ້ນຄົງ, ເສດຖະກິດ-ການຄ້າ, ວັດທະນະທຳ-ສັງຄົມ ແລະ ອື່ນໆ; ສະແດງຄວາມຍິນດີທີ່ການພົວພັນຮ່ວມມື ອາຊຽນ-ຣັດເຊຍ ຕະຫຼອດໄລຍະຜ່ານມາ ໄດ້ຮັບການເສີມຂະຫຍາຍຢ່າງຕັ້ງໜ້າ, ມີປະສິດທິຜົນ ແລະ ນັບມື້ເຂົ້າສູ່ລວງເລິກ, ບັນລຸໄດ້ຜົນສຳເລັດທີ່ໜ້າເພິ່ງພໍໃຈຫຼາຍດ້ານ ລວມທັງດ້ານການເມືອງ ແລະ ປະກອບສ່ວນສຳຄັນເຂົ້າໃນການຄ້ຳປະກັນຄວາມໝັ້ນຄົງ ແລະ ການຮ່ວມມື ໃນພາກພື້ນອາຊີ-ປາຊີຟິກ; ເນັ້ນໜັກເຖິງຄວາມຮັບຜິດຊອບ ແລະ ຄວາມມຸ່ງມາດປາດຖະໜາຂອງບັນດາປະເທດ ແລະ ພັກການເມືອງໃນພາກພື້ນ ໃນການຮັບປະກັນ, ເສີມຂະຫຍາຍຄວາມໝັ້ນຄົງ ແລະ ສົ່ງເສີມການຮ່ວມໃນພາກພື້ນ ໃນສະເພາະໜ້າ ແລະ ຍາວນານ.

ນອກຈາກນີ້, ສະຫາຍ ເລຂາທິການໃຫຍ່ ຍັງໄດ້ ແຈ້ງໃຫ້ບັນດາຜູ້ນຳພັກການເມືອງປະເທດອາຊຽນ ກ່ຽວກັບ ການເປັນປະທານອາຊຽນ ຂອງ ສປປ ລາວ ໃນປີ 2024 ພາຍໃຕ້ຄຳຂວັນ **“ເພີ່ມທະວີການເຊື່ອມຈອດ ແລະ ຄວາມເຂັ້ມແຂງ**

**ອາຊຽນ”,** ພັກ ແລະ ລັດຖະບານ ແລະ ປະຊາຊົນລາວບັນດາເຜົ່າ ມີຄວາມໝາຍໝັ້ນໃນການເສີມຂະຫຍາຍການສ້າງ ປະຊາຄົມອາຊຽນ ໃຫ້ມີການເຊື່ອມຈອດກັນຫຼາຍຂຶ້ນ ແລະ ມີຄວາມເຂັ້ມແຂງຫຼາຍຂຶ້ນ, ສົ່ງເສີມຄວາມສາມາດອາຊຽນ ເພື່ອສາມາດຈັບເອົາກາລະໂອກາດ ແລະ ຮັບມືກັບສິ່ງທ້າທາຍໃນປັດຈຸບັນ ແລະ ອະນາຄົດ. ພ້ອມດຽວກັນນັ້ນ, ສະຫາຍ ຍັງໄດ້ເຊື້ອເຊີນບັນດາການນຳພັກ, ລັດ ແລະ ປະຊາຊົນ ຂອງບັນດາປະເທດສະມາຊິກອາຊຽນ ແລະ ຮັດເຊຍ ມາຢ້ຽມຢາມ ສປປ ລາວ ໃນໂອກາດປີທ່ອງທ່ຽວລາວ 2024 ພາຍໃຕ້ຄຳຂວັນ: “ທ່ອງທ່ຽວລາວປອດໄພ, ຊື່ນໃຈ ວັດທະນະທຳ, ທຳມະຊາດ ແລະ ປະຫວັດສາດ”.

ຕອນທ້າຍ, ບັນດາຜູ້ແທນກອງປະຊຸມ ໄດ້ເຫັນດີເປັນເອກະພາບຮັບຮອງເອົາຖະແຫຼງຮ່ວມຂອງກອງປະຊຸມໃນຄັ້ງນີ້.

### 2) ຄະນະຜູ້ແທນຂັ້ນສູງ ຂອງ ພັກກອມມູນິດຈີນ ຢ້ຽມຢາມ ສປປ ລາວ




ໂດຍປະຕິບັດຕາມແຜນການຮ່ວມມື ລະຫວ່າງ ສອງພັກ ລາວ-ຈີນ ປະຈຳປີ 2023, ຄະນະຜູ້ແທນຂັ້ນສູງ ຂອງ ພັກກອມມູນິດຈີນ ນຳໂດຍ ສະຫາຍ ຫຼີ ຊູເຫຼີຍ, ກຳມະການກົມເມືອງສູນກາງພັກ, ເລຂາທິການສູນກາງພັກ, ຫົວໜ້າຄະນະ ໂຄສະນາສູນກາງພັກກອມມູນິດຈີນ ໄດ້ເດີນທາງມາຢ້ຽມຢາມ ສປປ ລາວ ແລະ ເຂົ້າຮ່ວມກອງປະຊຸມສຳມະນາທິດສະດີ ລະຫວ່າງ ສອງພັກ ລາວ-ຈີນ ຄັ້ງທີ 11 ແຕ່ວັນທີ 9-10 ມັງກອນ 2024 ພາຍໃຕ້ຫົວຂໍ້ “ບົດຮຽນ ແລະ ພຶດຕິກຳ ໃນການເພີ່ມທະວີປົກປັກຮັກສາລະບົບນິເວດແລະສິ່ງແວດລ້ອມ ໃນຂະບວນການກໍ່ສ້າງທັນເປັນທັນສະໄໝ”.

ສະຫາຍ ຫຼີ ຊູເຫຼີຍ ຍັງໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງ ພັກ ປປ ລາວ, ປະທານປະເທດ ແຫ່ງ ສປປ ລາວ ແລະ ໄດ້ພົບປະກັບ ສະຫາຍ ສຈ.ປອ. ກິແກ້ວ ໄຂຄຳພິທູນ, ກຳມະການ ກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ ສປປ ລາວ ແລະ ສະຫາຍ ປອ. ຄຳພັນ ເຜີຍຍະວົງ, ເລຂາທິການສູນ ກາງພັກ, ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ, ປະທານສະພາທິດສະດີສູນກາງພັກ ປປ ລາວ.

ໃນໂອກາດນີ້, ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຕີລາຄາສູງຕໍ່ກອງປະຊຸມສຳມະນາທິດສະດີ 2 ພັກ ລາວ-ຈີນ ຄັ້ງນີ້ ເປັນການປະກອບສ່ວນສຳຄັນເຂົ້າໃນການສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ການ ຮ່ວມມືແບບຄູ່ຮ່ວມຍຸດທະສາດ ຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ໃຫ້ນັບມື້ແຕກດອກອອກຜົນ, ດ້ວຍ ມາດຕະຖານສູງ, ຄຸນນະພາບສູງ ແລະ ລະດັບສູງກວ່າເກົ່າ; ສະຫາຍ ເລຂາທິການໃຫຍ່ ໄດ້ຊີ້ນຳໃຫ້ສອງອົງການ ສືບຕໍ່ຮັດ ແໜ້ນການພົວພັນຮ່ວມມື ແລະ ແລກປ່ຽນຂໍ້ມູນຂ່າວສານ, ແລກປ່ຽນບົດຮຽນດ້ານທິດສະດີ ແລະ ພຶດຕິກຳ ເຊິ່ງກັນ ແລະກັນ ການເພີ່ມທະວີການປົກປັກຮັກສາລະບົບນິເວດ ແລະ ສິ່ງແວດລ້ອມ ການກໍ່ສ້າງທັນເປັນທັນສະໄໝ ເພື່ອເສີມ ຂະຫຍາຍຄັງສາງທິດສະດີຂອງສອງພັກ.

ກອງປະຊຸມສຳມະນາດັ່ງກ່າວ ໄດ້ດຳເນີນໄປເປັນເວລາ 2 ວັນ ແລະ ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມ ເຊິ່ງສອງ ຝ່າຍໄດ້ປຶກສາຫາລື ແລະ ເອກະພາບກັນຢ່າງກວ້າງຂວາງ ໃນການເພີ່ມທະວີການພົວພັນຮ່ວມມື 2 ຄະນະໂຄສະນາອົບຮົມ ສູນກາງພັກ ລາວ-ຈີນ ໃນຕໍ່ໜ້າ ຕາມເນື້ອໃນຈິດໃຈທີ່ການນຳຂັ້ນສູງ ຂອງ 2 ພັກ ໄດ້ຕົກລົງເປັນເອກະພາບກັນ, ສອງຝ່າຍ

ຍິນດີສືບຕໍ່ຮັດແໜ້ນການພົວພັນຮ່ວມມື, ແລກປ່ຽນບົດຮຽນ ແລະ ໄປມາຫາສູ່ກັນໃຫ້ຫຼາຍຂຶ້ນ, ປະກອບສ່ວນເຂົ້າໃນການເພີ່ມພູນຖູນສ້າງສາຍພົວພັນ ລາວ-ຈີນ ໃຫ້ງອກງາມຍິ່ງຂຶ້ນ.

### 3) ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພົບປະກັບ ລັດຖະມົນຕີກະຊວງການຕ່າງປະເທດສິງກະໂປ



ວັນທີ 27 ມັງກອນ 2024, ທີ່ ຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ພົບປະເຮັດວຽກກັບ ທ່ານ ວິວຽນ ບາລາຄຣິສນານ, ລັດຖະມົນຕີກະຊວງການຕ່າງປະເທດແຫ່ງ ສ.ສິງກະໂປ ພ້ອມດ້ວຍຄະນະ ໃນໂອກາດເດີນທາງຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ ແລະ ເຂົ້າຮ່ວມກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ ຄັ້ງທີ 57 ແຕ່ວັນທີ 27-28 ມັງກອນ 2024.

ທ່ານ ຫົວໜ້າຄະນະພົວພັນຕ່າງປະເທດ ໄດ້ຕີລາຄາສູງ ຕໍ່ການຢ້ຽມຢາມ ສປປ ລາວ ແລະ ຍາດໂອກາດມາພົບປະເຮັດວຽກຢູ່ ຄຕພ, ອັນໄດ້ເປັນການປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການຮັດແໜ້ນສາຍພົວພັນມິດຕະພາບ ແລະ ການຮ່ວມມື ລາວ-ສິງກະໂປ ທີ່ພວມຢູ່ໃນບັນຍາກາດ ແຫ່ງການສະເຫລີມສະຫລອງວັນສ້າງຕັ້ງສາຍພົວພັນການທູດ ລາວ-ສິງກະໂປ ຄົບຮອບ 50 ປີ; ໄດ້ຕີລາຄາສູງສາຍພົວພັນມິດຕະພາບ ແລະ ການຮ່ວມມືສອງຝ່າຍ ເຊິ່ງເປັນການພົວພັນທີ່ສະເໝີຕົ້ນສະເໝີປາຍ ທັງໄດ້ຮັບການພັດທະນາ ແລະ ເສີມຂະຫຍາຍເປັນກ້າວໆ;

ທ່ານ ວິວຽນ ບາລາຄຣິສນານ ໄດ້ຕີລາຄາສູງ ຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມື ສິງກະໂປ-ລາວ ຕະຫຼອດ 50 ປີ ຜ່ານມາ ແລະ ຢືນຢັນຈະສືບຕໍ່ເສີມຂະຫຍາຍການພົວພັນຮ່ວມມືສອງຝ່າຍໃຫ້ໄດ້ຮັບການຂະຫຍາຍຕົວຂຶ້ນໄປເລື້ອຍໆ; ສິງກະໂປຍິນດີໃຫ້ການສະໜັບສະໜູນ ໃນການເປັນປະທານອາຊຽນຂອງ ສປປ ລາວ ໃນປີນີ້ໃຫ້ບັນລຸຜົນສຳເລັດຢ່າງຈົບງາມ.

ການພົບປະຄັ້ງນີ້ທັງສອງຝ່າຍ ມີຄວາມຍິນດີຢ່າງສູງໃນການສືບຕໍ່ຊຸກຍູ້ການພົວພັນຮ່ວມມືດ້ານພັກ ກໍຄືລະຫວ່າງພັກ ປປ ລາວ ແລະ ພັກກິດປະຊາຂອງສິງກະໂປ; ສົ່ງເສີມວຽກງານການທູດປະຊາຊົນສອງປະເທດ ເພື່ອສ້າງຄວາມເຂົ້າອົກເຂົ້າໃຈລະຫວ່າງ ປະຊາຊົນສອງຊາດ. ພ້ອມທັງຍັງໄດ້ເອກະພາບກັນສືບຕໍ່ຄົ້ນຄວ້າທ່າແຮງໃນການຮ່ວມມືໃນຕໍ່ໜ້າ ໂດຍສະເພາະ ດ້ານພະລັງງານສະອາດ, ພະລັງງານທົດແທນ, ເຕັກໂນໂລຊີ, ຊັບພະຍາກອນບໍ່ແຮ່, ການພັດທະນາຊັບພະກອນມະນຸດ, ການພັດທະກະສິກຳສະອາດ ແລະ ສີຂຽວ, ກາກບອນເຄຼດິດ, ດ້ານເສດຖະກິດ, ການຄ້າ, ການລົງທຶນ ການເຊື່ອມຍົງເຊື່ອມຈອດໃນພາກພື້ນອາຊຽນ ແລະ ອື່ນໆ.

**4) ສະຫາຍ ຫົວໜ້າ ຄຕພ ອວຍພອນການນຳ ກະຊວງປ້ອງກັນປະເທດ, ຢ້ຽມຢາມນາຍ ແລະ ພົນທະຫານ ທີ່ ສູນເສຍອົງຄະພິເສດ 790 ແລະ ກອງຮ້ອຍຊາຍແດນ 241.**



ໃນລະຫວ່າງວັນທີ 17-26 ມັງກອນ ຜ່ານມາ, ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ 75 ປີ (20 ມັງກອນ 1949-20 ມັງກອນ 2024) ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ນຳພາຄະນະໄປອວຍພອນການນຳຂອງກະຊວງປ້ອງກັນປະເທດ ເຊິ່ງໃຫ້ກຽດຕ້ອນຮັບໂດຍ ສະຫາຍ ພົນໂທ ປອ. ທອງລອຍ ສິລິວົງ, ກຳມະການສູນກາງພັກ, ຮອງລັດຖະມົນຕີ, ຫົວຫນ້າກົມໃຫຍ່ການເມືອງກອງທັບ; ຈາກນັ້ນ, ກໍໄດ້ໄປຢ້ຽມຢາມ ແລະ ພົບປະກັບ ຄະນະພັກ-ຄະນະບັນຊາ, ພະນັກງານຫຼັກແຫຼ່ງ, ນາຍ ແລະ ພົນທະຫານປະຕິວັດອາວຸໂສບຳນານ ທີ່ ສູນເສຍອົງຄະພິເສດ 790 ແລະ ກອງຮ້ອຍຊາຍແດນ 241 ໂດຍມີພາກສ່ວນກ່ຽວຂ້ອງຂອງ ຄຕພ ເຂົ້າຮ່ວມຢ່າງພ້ອມພຽງ.

ການຢ້ຽມຢາມສູນເສຍອົງຄະພິເສດ 790 ເພື່ອໃຫ້ກຳລັງໃຈແກ່ພະນັກງານ, ນາຍ ແລະ ພົນທະຫານໜຸ່ມນ້ອຍ ທີ່ກຳລັງເຮັດໜ້າທີ່ດູແລເບິ່ງແຍ່ງບັນດານັກຮົບບຳນານເສຍອົງຄະ ຈິ່ງມີຄວາມພາກພູມໃຈທີ່ໄດ້ຮັບໃຊ້ພວກເພິ່ນເຫຼົ່ານີ້ ຍ້ອນການເສຍສະຫຼະ ແລະ ປະກອບສ່ວນອັນປະເສີດໃນການຕໍ່ສູ້ເດັດດ່ຽວ, ພິລະອາດຫານ, ບໍ່ຍອມຈຳນົນ ຍາກປານໃດກໍບຸກ, ທຸກປານໃດກໍສູ້, ເສຍສະຫລະເລືອດເນື້ອໂດຍບໍ່ເສຍດາຍຊີວິດໃນມື້ນັ້ນ ຈິ່ງເຮັດໃຫ້ພວກເຮົາຮັກສາໄດ້ ເອກະລາດ ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງ ສປປ ລາວໄວ້ໄດ້ຈົນຮອດມື້ນີ້. ພ້ອມນີ້, ສະຫາຍ ຫົວໜ້າ ຄຕພ ຍັງໄດ້ນຳພາຄະນະ ຢ້ຽມຢາມໃຫ້ກຳລັງໃຈບັນດາທະຫານອະວຸໂສບຳນານເສຍອົງຄະທີ່ກຳລັງປິ່ນປົວຢູ່ໂຮງໝໍຂອງສູນ 790.

ພ້ອມນີ້, ສະຫາຍ ຫົວໜ້າ ຄຕພ ໄດ້ໂອ້ລົມຕໍ່ຄະນະພັກ-ຄະນະບັນຊາ, ພະນັກງານ-ນັກຮົບ ກອງຮ້ອຍຊາຍແດນ 241 ຈົ່ງສືບຕໍ່ຮັກສາມູນເຊື້ອ, ທາດແທ້ປະຕິວັດຂອງກອງທັບ, ບໍລິສຸດ ແລະ ເດັດດ່ຽວໝຽວແໜ້ນ; ສືບຕໍ່ຈັດຕັ້ງປະຕິບັດມະຕິກອງກອງປະຊຸມໃຫຍ່ຂອງພັກ ໂດຍຖືເອົາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບເປັນສຳຄັນ, ຫັນເອົາກຳລັງລົງກໍ່ສ້າງຮາກຖານການເມືອງ ພັດທະນາຊົນນະບົດຮອບດ້ານ ຕາມ 4 ເນື້ອໃນ 4 ຄາດໝາຍ; ສຸມໃສ່ສ້າງບ້ານປ້ອງກັນຊາດເຂັ້ມແຂງ, ກຸ່ມບ້ານປ້ອມໝັ້ນສູ້ຮົບເຂັ້ມແຂງໃຫ້ເພີ່ມຂຶ້ນທາງດ້ານຈຳນວນ ແລະ ຄຸນນະພາບ; ເປັນເຈົ້າການປ້ອງກັນ, ກວດກາຕິດຕາມເຂດຫລັກ ໝາຍຊາຍແດນຕ່າງໆ ແລະ ສັງຄົມທົ່ວໄປ ເພື່ອຮັບປະກັນສ້າງເງື່ອນໄຂໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມໄດ້ຂະຫຍາຍຕົວຢ່າງຕໍ່ເນື່ອງ; ຍົກສູງນ້ຳໃຈເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ສ້າງພະລາທິການກັບທີ່ຕາມເງື່ອນໄຂທ່າແຮງບົ່ມຊ້ອນຂອງກົມກອງ.

ໃນການເຄື່ອນໄຫວດັ່ງກ່າວ, ສະຫາຍຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ມອບວັດຖຸປັດໄຈຈຳນວນໜຶ່ງ ໃຫ້ແກ່ສູນເສຍອົງຄະພິເສດ 790 ແລະ ກອງຮ້ອຍຊາຍແດນ 241 ຕື່ມອີກ.

### 5) ລະນຶກເຖິງ ທ່ານ ໂຮເຊ ມາກຕີ, ວິລະຊົນແຫ່ງຊາດກູບາ ເນື່ອງໃນໂອກາດ ວັນເກີດ ຄົບຮອບ 171 ປີ



ວັນທີ 26 ມັງກອນ ຜ່ານມາ, ສະມາຄົມມິດຕະພາບ ລາວ-ກູບາ ຮ່ວມກັບສະຖານເອກອັກຄະລັດຖະທູດ ແຫ່ງ ສ.ກູບາ ປະຈຳ ສປປ ລາວ ໄດ້ຈັດພິທີວາງກະຕ່າດອກໄມ້ ເພື່ອລະນຶກເຖິງ ທ່ານ ໂຮເຊ ມາກຕີ, ວິລະຊົນແຫ່ງຊາດກູບາ ເນື່ອງໃນໂອກາດວັນເກີດ ຂອງ ທ່ານ ໂຮເຊ ມາກຕີ ຄົບຮອບ 171 ປີ (28/01/1853 – 28/01/2024) ທີ່ໂຮງຮຽນມັດທະຍົມສົມບູນ ດົງບັງມິດຕະພາບ ລາວ-ກູບາ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ. ໃຫ້ກຽດເຂົ້າຮ່ວມ ຂອງທ່ານ ສຈ.ປອ ຈະເລີນ ເຢ່ຍປາວເຮີ, ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບ ລາວ-ກູບາ, ແລະ ທ່ານ ນາງ ແອນນາ ເອັດເຕ ວຽງ ວາເດສ (Enna Esther Viant Valdes) ເອກອັກຄະລັດຖະທູດ ວິສາມັນຜູ້ມີອຳນາດເຕັມ ແຫ່ງ ສ.ກູບາ ປະຈຳ ສປປ ລາວ. ການຈັດພິທີຄັ້ງນີ້ ເພື່ອສະແດງເຖິງຄວາມເຄົາລົບຮັກ, ກະຕັນຍູຮູ້ບຸນຄຸນອັນໃຫ່ຍຫຼວງຕໍ່ ທ່ານ ໂຮເຊ ມາກຕີ, ຜູ້ທີ່ໄດ້ເສຍສະຫຼະເພື່ອການປະຕິວັດຂອງກູບາ, ທັງເປັນການສະແດງເຖິງການຮັດແໜ້ນສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ມີມູນເຊື້ອອັນດີງາມລະຫວ່າງ 2 ພັກ, 2 ລັດ, ປະຊາຊົນ 2 ຊາດລາວ ແລະ ກູບາ ໃຫ້ນັບມື້ມີບາດກ້າວໃໝ່ ແລະ ເປັນການສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດ ລາວ-ກູບາ ຄົບຮອບ 50 ປີ. ເພື່ອໃຫ້ນັກຮຽນນັກສຶກສາ, ປະຊາຊົນລາວຮັບຮູ້ ແລະ ເຂົ້າໃຈເຖິງປະຫວັດສາດແຫ່ງການຕໍ່ສູ້ປະຕິວັດອັນກ້າແກ່ນ ເປັນຈິດໜຶ່ງໃຈດຽວຂອງປະຊາຊົນກູບາ ແລະ ໝາກຜົນຂອງສາຍພົວພັນມິດຕະພາບ, ການຮ່ວມມືທີ່ເປັນມູນເຊື້ອ ອັນດີງາມ ລະຫວ່າງ ລາວ-ກູບາ ແລະ ທັງເປັນໂອກາດຮຽນຮູ້ກ່ຽວກັບຊີວິດ ແລະ ການເຄື່ອນໄຫວປະຕິວັດ ຂອງ ທ່ານ ໂຮເຊ ມາກຕີ, ວິລະຊົນແຫ່ງຊາດກູບາ.

### 6) ຄຕພ ຈັດປາຖະກະຖາ 20 ມັງກອນ ຄົບຮອບ 75 ປີ ແລະ ວັນເກີດປະທານ ຄຳໄຕ ສີພັນດອນ ຄົບຮອບ 100 ປີ.




ວັນທີ 18 ມັງກອນ ຜ່ານມາ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມເຜີຍແຜ່ເອກະສານ ວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 75 ປີ (20 ມັງກອນ 1949 - 20 ມັງກອນ 2024) ແລະ ວັນເກີດປະທານ ຄຳໄຕ ສີພັນດອນ ຄົບຮອບ 100 ປີ (08 ກຸມພາ 1924 - 08 ກຸມພາ 2024) ມີຄະນະພັກ, ຄະນະກົມ, ພະແນກ ແລະ ພະນັກງານທົ່ວ ຄຕພ ເຂົ້າຮ່ວມ. ໂດຍໃຫ້ກຽດເຜີຍແຜ່ ໂດຍ ສະຫາຍ ພົ.ວ ຜາລົມ ລົນທອງ, ອະດີດກຳມະການຄະນະປະຈຳພັກກະຊວງປ້ອງກັນປະເທດ, ອະດີດຮອງຫົວໜ້າກົມໃຫຍ່ການເມືອງກອງທັບ, ປະທານສະຫະພັນນັກຮົບເກົ່ານະຄອນຫຼວງວຽງຈັນ, ເຊິ່ງສະຫາຍ ໄດ້ຍົກເຫັນເຖິງ ສະພາບແວດລ້ອມກ່ອນການສ້າງຕັ້ງກອງທັບ, ການກຳເນີດ, ຄວາມຈຳເປັນພາວະວິໄສ ແລະ ຄວາມສຳຄັນຂອງການສ້າງຕັ້ງກອງທັບປະຊາຊົນລາວ, ເຊິ່ງການສ້າງຕັ້ງກອງທັບປະຊາຊົນລາວ ເປັນເຫດການ

ປະຫວັດສາດໜຶ່ງທີ່ສຳຄັນ, ແມ່ນບາດກ້າວເຕີບໃຫຍ່ເຂັ້ມແຂງຂອງກຳລັງປະກອບອາວຸດປະຕິວັດ ແລະ ເປັນກຳລັງຫຼັກແຫຼ່ງໃຫ້ຂະບວນການຕໍ່ສູ້ຂອງປະຊາຊົນລາວ. ມີຜົນງານໃຫຍ່ຫຼວງ ກອງທັບສາມາດຍາດໄດ້ຫຼຽນຄຳແຫ່ງຊາດ ຈຳນວນ 5 ໜ່ວຍ, ໄດ້ຮັບນາມມະຍົດກອງພັນວິລະຊົນ 07 ກອງພັນ, ກອງຮ້ອຍວິລະຊົນ 37 ກອງຮ້ອຍ, ວິລະຊົນແຫ່ງຊາດ 68 ສະຫາຍ ແລະ ນັກຮົບແຂ່ງຂັນ 415 ສະຫາຍ.

ພ້ອມກັນນີ້, ສະຫາຍ ພ.ວ ຜາລົມ ລົມທອງ ກໍໄດ້ຍົກໃຫ້ເຫັນເຖິງຊີວິດການກຳເນີດ ແລະ ການເຕີບໃຫຍ່ໃນແປວໄຟແຫ່ງການປະຕິວັດ ຂອງປະທານ ຄຳໄຕ ສີພັນດອນ, ແບບແຜນຊີ້ນຳ-ນຳພາ, ການອຸທິດຕົນຢ່າງສຸດກຳລັງສຸດປາຍເພື່ອປະເທດຊາດ, ເພື່ອປະຊາຊົນ, ເພື່ອຄວາມໝັ້ນຄົງເຂັ້ມແຂງ ແລະ ຄວາມຈະເລີນວັດທະນາຂອງປະເທດຊາດ, ເພື່ອຄວາມຢູ່ດີກິນດີ ແລະ ຄວາມຮັ່ງມີຜາສຸກຂອງປະຊາຊົນລາວບັນດາເຜົ່າ. ເພິ່ນເປັນໜຶ່ງໃນຜູ້ນຳຮຸ່ນກໍ່ຕັ້ງຂະບວນການ ແລະ ບຸກເບີກເສັ້ນທາງການປະຕິວັດ ຢູ່ປະເທດເຮົາ ຊຶ່ງຍາມໃດເພິ່ນກໍມີຄວາມໜັກແໜ້ນທາງດ້ານການເມືອງ, ມີສະຕິຕໍ່ການຈັດຕັ້ງ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ມອບໝາຍ, ເລີ່ມຈາກພະນັກງານທຳມະດາກາຍເປັນຜູ້ຊີ້ນຳ-ບັນຊາ ແລະ ນຳພາຂະບວນການຕໍ່ສູ້ປົດປ່ອຍຊາດ ຮ່ວມກັບປະທານ ໄກສອນ ພົມວິຫານ, ປະທານ ສຸພານຸວົງ ແລະ ຜູ້ນຳທ່ານອື່ນໆ ຂອງແນວລາວສ້າງຊາດໄດ້ຮັບໄຊຊະນະ, ສະຖາປະນາ ສປປ ລາວ ຂຶ້ນຢ່າງສະຫງ່າຜ່າເຜີຍ ໃນວັນທີ 2 ທັນວາ ປີ 1975. ຫຼັງຈາກນັ້ນ ເພິ່ນກໍໄດ້ສືບຕໍ່ປະກອບສ່ວນຄົ້ນຄວ້າ ແລະ ກຳນົດທິດທາງໜ້າທີ່ຍຸດທະສາດ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ລວມທັງແນວທາງປ່ຽນແປງໃໝ່ອອກຢ່າງຖືກຕ້ອງ, ສອດຄ່ອງ ທັງໄດ້ສືບຕໍ່ນຳພາ-ຊີ້ນຳການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນສຳເລັດອັນສຳຄັນຫຼາຍດ້ານ.

## III. ການເຄື່ອໄຫວວຽກງານ ຂອງສາມອົງການຈັດຕັ້ງມະຫາຊົນ ຄຕພ.

**ພະນັກງານ ຄຕພ ໄປຢ້ຽມຊົມຫໍພິພິທະພັນ ກອງທັບປະຊາຊົນລາວ.**



ວັນທີ 17 ມັງກອນ ຜ່ານມາ, ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ກໍຄື 3 ອົງການຈັດຕັ້ງມະຫາຊົນ ຄຕພ ນຳໂດຍ ສະຫາຍ ວົງຄຳ ແສນສະທິດ, ຮອງຫົວໜ້າກົມການທູດປະຊາຊົນ, ຮັກສາການເລຂາຄະນະບໍລິຫານງານຊາວໜຸ່ມ ຄຕພ ໄດ້ເຂົ້າຢ້ຽມຊົມຫໍພິພິທະພັນກອງທັບປະຊາຊົນລາວ ເພື່ອສ້າງຂະບວນການຂໍ່ານັບຮັບຕ້ອນ ວັນເກີດ ທ່ານ ຄຳໄຕ ສີພັນດອນ, ອະດີດປະທານພັກ, ອະດີດປະທານປະເທດ ແຫ່ງ ສປປ ລາວ ຄົບຮອບ 100 ປີ (08/02/1924-08/02/2024) ແລະ ວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 75 ປີ (20/01/1949-20/01/2024) ເພື່ອເປັນການທວນຄືນມູນເຊື້ອການເຄື່ອນໄຫວປະຕິວັດຂອງ ບັນດາຜູ້ນຳການປະຕິວັດ, ວິລະກຳອັນໂດດເດັ່ນ ແລະ ຄວາມເດັດດ່ຽວບໍ່ຍອມຈຳນົນຂອງບັນດາອະດີດທ່ານຜູ້ນຳ ໃນຂະບວນການປະຕິວັດຊາດ ຕ້ານຈັກກະພັດລ່າເມືອງຂຶ້ນທັງແບບເກົ່າ ແລະ ແບບໃໝ່. ຊຶ່ງຜູ້ເຂົ້າຮ່ວມໄດ້ຮັບຟັງການບັນລະຍາຍກ່ຽວກັບວິລະກຳການຕໍ່ສູ້ກູ້ຊາດຂອງການນຳພັກ-ລັດ, ປະຫວັດການເຕີບໃຫ່ຍຂະຫຍາຍຕົວຂອງກອງທັບປະຊາຊົນລາວ ເຊິ່ງເຮັດໃຫ້ຜູ້ເຂົ້າຮ່ວມ ໄດ້ຮັບຮູ້ ແລະ ເຂົ້າໃຈເລິກເຊິ່ງກວ່າເກົ່າຕໍ່ເຫດການໃນການຕໍ່ສູ້ທີ່ສຳຄັນທາງດ້ານການເມືອງ ແລະ ການທະຫານ ໃນແຕ່ລະໄລຍະ ທັງເປັນການຮຽນຮູ້, ປຸກຈິດສຳນຶກຍົກສູງສະຕິຕໍ່ຊາດ ແລະ ການສຶກສາອົບຮົມການເມືອງແນວຄິດໃຫ້ພະນັກງານ ຄຕພ. ເພື່ອນຳເອົາບົດຮຽນທາງປະຫວັດສາດ ມາໝູນໃຊ້ເຂົ້າໃນໜ້າວຽກງານການເມືອງຕົວຈິງຂອງຕົນ ໃຫ້ມີຜົນສຳເລັດ.